This VIS translation is out of date. When you give your patient this translation, also give them the up-to-date English version of it.
To get both, and to find out what was updated, go to www.immunize.org/vis

ຂໍ້ມູນ ຣາຍງານ ກ່ຽວກັບ ເຣື່ອງຢາສັກ ກັນໂຣກ (VIS)

# ຢາສັກ ກັນໂຣກອອກຕຸ່ມຕາມຜີວໜັງ

# (SMALLPOX VACCINE)

## ສິ່ງ ທີ່ ທ່ານ ຄວນ ຮູ້

## 1 ໂຣກອອກຕຸ່ມຕາມຜີວໜັງ ແມ່ນໜຍັງ smallpox?

ໂຣກອອກຕຸ່ມຕາມຜີວໜັງ ຫຼື **smallpox** ແມ່ນເຊື້ອໂຣກຊະນິດນື່ງ ຊື່ງຂ້າຄົນຈຳນວນຫຼວງຫຼາຍເຖີງ 30% ຂອງຜູ້ທີ່ເຊື້ອໂຣກນີ້.

*ມັນເກີດຈາກເຊື້ອ ໂຣກວາຍຣາສ ຊື່* ວາໂອລາ **variola** *ຊື່ງ ແຜ່ລະບາດຈາກຜູ້ນື່ງ ໄປຫາອີກຜູ້ນື່ງ ເນື່ອງຈາກການຕິດຕໍ່ ໂດຍການຢູ່ໃກ້ຄຽງກັນ.*

*ໂຣກອອກຕຸ່ມຕາມຜີວໜັງຍັງຈະກໍ່ໃຫ້ເກີດ:*

- *ອອກຕຸ່ມເປັນພື່ນແດງ, ຊື່ງຈະເກີດຮອຍຕາບ ຫຼັງຈາກເຊົາແລ້ວ*
- *ເປັນໄຂ້ຂື້ນສູງ*
- *ເມື່ອຍ*
- *ເຈັບຫົວແຮງ ແລະເຈັບຫຼັງ*
- *ບໍ່ເຫັນຮຸ່ງ ຫຼື ເສັຍສາຍຕາ*

*ຄັ້ງສຸດທ້າຍທີ່ເກີດເປັນປະຫວັດການໃນ ໂລກເຣື່ອງ ໂຣກອອກຕຸ່ມຕາມຜີວ ໜັງແມ່ນໃນປີ* 1977.

## 2 ເປັນຫຍັງຈື່ງຕ້ອງ ສັກຢາກັນ ໂຣກອອກຕຸ່ມຕາມຜີວໜັງ?

*ຢາກັນ ໂຣກອອກຕຸ່ມຕາມຜີວໜັງສາມາດປ້ອງກັນຄົນຜູ້ທີ່ທຳງານກັບ ໂຣກນີ້ ຫຼື ກ່ຽວຂ້ອງກັບການທົດລອງວິໃຈ ໂຣກນີ້.*

*ແຕ່ຍັງພໍເຊື່ອໄດ້ອີກວ່າຂບວນຜູ້ກໍ່ການລ້າຍ ຫຼືຜູ້ຕໍ່ຕ້ານຣັຖບານສະຫາຣັຖ ອາດຈະມີເຊື້ອ ໂຣກນີ້ແລະອາດຈະໃຊ້ມັນເປັນອາວຸດທາງເຄມີ. ຢາກັນ ໂຣກສາມາດ ປ້ອງກັນສຸຂພາບຂອງໜ່ວຍງານແພທ ແລະກຸ່ມຄົນຜູ້ທີ່ ເຮັດວຽກໃນດ່ານແຣກ ຂອງພຍາດນີ້. ໜ່ວຍງານແພທເຫຼົ່ານີ້ຈະເປັນ ຜູ້ເບີ່ງວ່າບຸກຄົນປະເພດໃດ ທີ່ຄວນຈະໄດ້ຮັບການສັກຢາປ້ອງກັນກ່ອນ. ແລະບອກໃຫ້ເຂົ້າໄປສັກຢາກັນ ໂຣກທີ່ຄລີນີກ.*

## 3 ໂຣກອອກຕຸ່ມຕາມຜີວໜັງ?

*ເຊື້ອຢາກັນ ໂຣກອອກຕຸ່ມຕາມຜີວໜັງແມ່ນຜະລິດຈາກເຊື້ອວາຍຣາສ ທີ່ເອີ້ນວ່າ* ແວກຊີນເນັຍ vaccinia. *ເຊື້ອວາຍຣາສ ແວກຊີນເນັຍ ຄ້າຍຄືກັນກັບເຊື້ອ ໂຣກອອກຕຸ່ມຕາມຜີວໜັງ, ແຕ່ມັນບໍ່ເປັນອັນຕະຣາຍ ແຮງ. ເຊື້ອແວກຊີນເນັຍ ສາມາດປ້ອງກັນຄົນຈາກການຕິດເຊື້ອ ໂຣກ ອອກຕຸ່ມຕາມຜີວໜັງນີ້.*

*ການສັກຢາປ້ອງກັນກ່ອນ ທີ່ຈະຕິດເຊື້ອ ໂຣກ ນີ້ສາມາດຄົນຈາກການຕິດເຊື້ອ ໂຣກອອກຕຸ່ມຕາມຜີວໜັງນີ້. ການສັກຢາ ພາຍໃນ 3 ວັນຫຼັງຈາກ ທີ່ຖືກຕິດເຊື້ອ ນີ້ສາມາດປ້ອງກັນ ໂຣກນີ້ໄດ້ ຫຼື ຢ່າງນ້ອຍກໍ່ຊ່ວຍຄວບຄຸມ ບໍ່ໃຫ້ມັນເກີດແຮງ.*

*ຜູ້ທີ່ຖືກປົ່ນປົວ ມາດົນນານ ຈາກການໃຊ້ ຢາເສພຕິດ ສະເຕີຣອຍ.*
*ຜູ້ທີ່ປົ່ນປົວ ໂຣກມະເລັງຈາກການສ່ອງໄຟຟ້າຫຼືໃຊ້ ຢາຕ່າງໆ. ສັກຢາກັນ ໂຣກພາຍໃນນື່ງອາທິດ ຫຼັງຈາກຖືກຕິດເຊື້ ອ ໂຣກແລ້ວຍັງສາມາດ ຄວບຄຸມບໍ່ໃຫ້ມັນເກີດແຮງໄດ້. ການປ້ອງກັນຈາກການຕິດເຊື້ອຈະ ກຸ້ມໄດ້ ດົນເຖີງ 3-5 ປີ, ແລະການປ້ອງກັນຈາກການປ່ວຍໜັກ ຫຼື ເສັຍຊີວິດ ນັ້ນ ຈະກຸ້ມໄດ້ດົນເຖີງ10 ປີ. ຫຼື ດົນກວ່ານັ້ນ.*

## 4 ໃຜແດ່ທີ່ຄວນຈະສັກປ້ອງກັນ ໂຣກນີ້ແລະສັກເມື່ອເວລາໃດ?

**ເຂົ້າໄປຮັກການສັກຢາກັນ ໂຣກ ໃນຍາມທີ່ບໍ່ສຸກເສີນ (ຍາມທີ່ ໂຣກບໍ່ລະບາດ).**

- *ພະນັກງານແພທໃນຫ້ອງວິໃຈ ກ່ຽວກັບການຕິດເຊື້ອຂອງສັດ ຫຼື ການຖືກຕິດເຊື້ອ ໂຣກ ແວກຊີເນັຍ ຫຼື ເຊື້ອ ໂຣກ ວາຍຣາສຊະນິດອື່ນໆ ທີ່ກ່ຽວຂ້ອງກັນ. (ການຕິດເຊື້ອ ໂຣກ ຂອງລີງ, ງົວ ແລະ ວາຣີ ໂອລາ.)*
- *ສາທາຣະນະສຸກ, ໂຮງພຍາບານ, ພະນັກງານແພທ, ແລະບຸກຄົນທົ່ວ ໄປ* 18-65 *ປີ, ຜູ້ທີ່ທຳງານກ່ຽວກັບເຊື້ອ ໂຣກນີ້ແລະທີ່ກ່ຽວຂ້ອງກັບ ການລະບາດຂອງ ໂຣກນີ້.*

**ເຂົ້າໄປຮັກການສັກຢາກັນ ໂຣກ ໃນຍາມທີ່ສຸກເສີນ (ຍາມທີ່ ໂຣກລະບາດ).**

- *ທຸກຄົນຜູ້ທີ່ຖືກຕິດເຊື້ອ ໂຣກອອກຕຸ່ມຕາມຜີວໜັງ ໂດຍທາງກົງ ຄວນຈະໄປສັກຢາປ້ອງກັນ ໂຣກນີ້ນື່ງເຂັມ ໄວເທົ່າທີ່ຈະໄວໄດ້ໃນເມື່ອຖືກ ຕິດເຊື້ອແລ້ວ.*
- *ທຸກຄົນຜູ້ທີ່ຢູ່ໃນ* **ພາວະສ່ຽງ** *ຕໍ່ການຖືກຕິດເຊື້ອ ໂຣກ ຄວນຈະໄປສັກຢາ ປ້ອງກັນໄວ້ນື່ງຂຸມ. ໃນເມື່ອຮູ້ວ່າ ໂອກາດສ່ຽງນັ້ນມີສູງ ຫຼືຮູ້ວ່າຖືກຕິດເຊື້ອແລ້ວ.*

*ຜູ້ທີ່ເຄີຍສັກຢາກັນ ໂຣກຊະນິດນື່ງມາດົນ ກວ່າ 3-5 ປີ ແລ້ວ ນັ້ນຄວນຈະ ໄປສັກຢາໃໝ່ອີກ ນີ້ກໍ່ຂື້ນກັບພາວະຄວາມສ່ຽງ.*

## 5 ອາການ ຫຼັງຈາກສັກຢາ ກັນ ໂຣກອອກຕຸ່ມຕາມຜີວໜັງ

***ໃຫ້ເບີ່ງຄຳແນະນຳ VIS ໃນພາກ A ແລະ B ສຳຣັບລາຍລະອຽດ ເພີ້ມຕື່ມ.***

**ອາການທີ່ອາດຈະເກີດຂື້ນ ຫຼັງການສັກຢາ**
*ບໍຣິເວນທີ່ສັກຢານັ້ນອາດຈະເກີດໃຄ່ພອງເລັກນ້ອຍ, ຈາກນັ້ນມັນກໍ່ຈະ ແຫ້ງເຂົ້າ, ໃນທີ່ສຸດມັນກໍ່ຈະຕົກເກັດແຫ້ງ ແລະລອກອອກໄປເອງ, ເຫຼືອໄວ້ພຽງຮອຍຕາບ.*

*ທ່ານອາດຈະຮູ້ສຶກວ່າມັນໄຄ່ແລະບວມນູນ ດົນເຖີງ 2-4 ອາທິດ ຫຼັງຈາກຮອຍສັກນັ້ນແຫ້ງດີແລ້ວ ແລະອາດຈະເກີດຄັນບໍຣິເວນບ່ອນ ສັກຢາ, ເມື່ອຍ, ເປັນໄຂ້ເລັກນ້ອຍ, ເຈັບຫົວ ຫຼື ປວດຕາມກ້າມເນື້ອ*

**ການຮັກສາ ບໍຣິເວນທີ່ຖືກສັກຢາ.**
**ຈົນກະທັ້ງ ມັນຕົກເກັດແຫ້ງດີນັ້ນ, ທ່ານຍັງສາມາດ ທີ່ຈະແຜ່ລະບາດເຊື້ອ ໂຣກແວກຊີນເນັຍ ວາຍຣາສ ໄປຍັງຢູ່ອື່ນໄດ້ ຫຼື ພາກສ່ວນໃດສ່ວນນື່ງ ໃນຮ່າງກາຍຂອງທ່ານ.**
*ການປ້ອງກັນນີ້ກໍ່ຄື, ໃຊ້ຜ້າພັນແຜທໍ່ໄວ້ຫລົມໆທີ່ບໍຣິເວນທີ່ສັກຢາ (ໃນຂນະທີ່ທຳງານ, ຖ້າຫາກເປັນພະນັກງານແພທ ຈະຕ້ອງປະຕິບັດ ເຄັ່ງຄັດ ກວ່ານັ້ນຄືຈະຕ້ອງໃຫ້ແນ່ໃຈວ່າການທໍ່ພັນບໍຣິເວນບາດແຜນັ້ນຈະຕ້ອງ ເຮັດໃຫ້ຖືກລະບຽບການ.)*

*ການປ່ຽນຜ້າພັນແຜຕ້ອງໄດ້ປ່ຽນ ຕາມຄວາມຕ້ອງການ (ທຸກໆ* 1-3 *ວັນ, ຖ້າປ່ຽນຍອງຝ້າຍທີ່ທໍ່ຕິດແຜ, ແລະ ຢ່າງນ້ອຍ 3-5 ວັນ ຖ້າຈະປ່ຽນບັງ*

*ຕໍ່ໜ້າໃໝ່...*

ຫຼືຜ້າຄຽນຍອງຢ້າຍນັ້ນ.) ເວລາອາບນ້ຳຄວນໃຊ້ຜ້າພັນ ແຜຊະນິດທີ່ກັນນ້ຳໄດ້. ຢ່າຈັບບາຍບໍຣິເວນສັກຢາ ແລ້ວມາຈັບບາຍ ແຕະຕ້ອງພາກສ່ວນໃ ດນຶ່ງຂອງຮ່າງກາຍ ໂດຍທີ່ບໍ່ໄດ້ລ້າງມືໃຫ້ສະອາດ ກ່ອນ. **ຢ່າເກົາ ຫຼື ເອົາຢາໜ່ອງທາບ່ອນທີ່ຖືກ ສັກຢານັ້ນ. ຢ່າບາຍຕາ ຫຼື ພາກສ່ວນໃດນຶ່ງ ຂອງຮ່າງກາຍ ຫຼັງຈາກປ່ຽນຜ້າຫໍ່ແຜ ຫຼືລູບບາຍບ່ອນ ທີ່ສັກຢານັ້ນ.**

ຕ້ອງນຸ່ງເສື້ອທີ່ຊ່ວຍບັງບ່ອນສັກຢາໄດ້, ລະວັງເປັນພິເສດໃນເວລາທີ່ຢູ່ ໃກ້ກັນ ເພື່ອປ້ອງກັນຜູ້ອື່ນຈະມາຕຳຖືກບ່ອນສັກຢາ (ຕົວຢ່າງ, ລະຫວ່າງພໍ່ແມ່ ແລະລູກທີ່ຢູ່ຮ່ວມກັນ.)

ກ່ອນຈະຖິ້ມ ຜ້າພັນແຜ່ທີ່ໃຊ້ແລ້ວ, ຕ້ອງໃສ່ໃນຖົງຢາງທີ່ມີຊິບຮູດກ່ອນ. ເຮັດເໜືອນກັນກັບຕອນບາດຕົກເກັດເຫັ້ງນັ້ນ. ຫ້າມບໍ່ໃຫ້ໃຊ້ຜ້າເຊັດຕົວ ຮ່ວມກັນ. ຊັກເສື້ອຜ້າຫຼືສິ່ງຂອງອັນໃດຫາກເຄີຍໄປຖືກບ່ອນສັກຢານັ້ນ. ຕ້ອງລ້າງມືຂອງ ທ່ານຫຼັງຈາກໄປຈັບບາຍບ່ອນສັກຢາ, ຜ້າພັນແຜ, ເຄື່ອງນຸ່ງ, ຜ້າປູຕຽງນອນ ແລະຜ້າແພເຊັດຕົວ ອັນໃດທີ່ມັນຖືກ ບ່ອນສັກຢານັ້ນ.

**ບໍຣິເວນທີ່ສັກຢານັ້ນຄວນຈະຕ້ອງໄດ້ກວດເບິ່ງໃນວັນທີເຈັດ ຫຼັງຈາກ ວັນທີ່ໄດ້ສັກຢານັ້ນ ເພື່ອຈະໄດ້ຮູ້ວ່າຢານັ້ນທຳງານ.**

## 6 ບາງຄົນບໍ່ຄວນຈະສັກຢາປ້ອງກັນໂຣກນີ້ ຫຼື ຄວນລໍຖ້າ

*ໃຫ້ເບິ່ງຄຳແນະນຳ **VIS** ໃນພາກ **C, D** ແລະ **E** ສຳຣັບລາຍລະອຽດ ພີ່ມຕື່ມ.*

### ເຂົ້າໄປຮັກການສັກຢາກັນໂຣກ ໃນຍາມທີ່ບໍ່ສຸກເສີນ (ຍາມທີ່ໂຣກບໍ່ລະບາດ).

- ຜູ້ທີ່ເປັນຂີ້ກາກ ຫຼື ໂຣກຜີວໜັງ, ຫຼືເຄີຍມີບັນຫາເຣື່ອງ ໂຣກຜີວໜັງ ທັງສອງຊະນິດນີ້ມາກ່ອນ, ບໍ່ຄວນຈະສັກຢາກັນໂຣກນີ້.

- ຜູ້ທີ່ມີບັນຫາເຣື່ອງຜີວໜັງ **ທີ່ເປັນສາຍເຫດກໍ່ໃຫ້ຜີວໜັງແຕກຂາດ,** (ເຊັ່ນ ແພ້ຜື່ນຄັນ, ຖືກລວກໄໝ້ຢ່າງແຮງ, ເປັນຕຸ່ມພອງ, ອອກຕຸ່ມມາກສຸກມາກໃສ, ເປັນຕຸ່ມ, ໂຣກງູສຫວັດ ຫຼື ສິວ) ຄວນຈະລໍຖ້າ ຈົນກວ່າອາການດີຂື້ນ ກ່ອນຈະເລີ່ມສັກຢານີ້.

- ບຸກຄົນຜູ້ທີ່ມີພູມຕ້ານທານພຍາດຕ່ຳທີ່ຍັງອອ່ນເພັຍບໍ່ຄວນຈະສັກຢາ ກັນໂຣກນີ້ ແລະຍັງລວມທັງບຸກຄົນຜູ້ທີ່:
  - ມີການມະໂຣກຕິດຕໍ່ /ແລະ ໂຣກເອັສ ຫຼືໂຣກອື່ນໆທີ່ກໍ່ໃຫ້ເກີດຜົນເສັຍຫຼື ທຳໃຫ້ພູມຕ້ານທານພຍາດໃນຮ່າງກາຍຕ່ຳ.
  - ມີພູມຕ້ານທານພຍາດໃນຮ່າງກາຍຕ່ຳ ຊຶ່ງເກີດຈາກພຍາດໃນຮ່າງກາຍ ເຊັ່ນກໍ່ຕົວຂື້ນຕໍ່ຕ້ານເນື້ອເຍື້ອຂອງຕົວເອງ, ກຸ່ມຂອງ ໂຣກຜີວໜັງໃດທີ່ມີບາດແຜຫຼືຮອຍແຜ.
  - ພວມກຳລັງໄດ້ຮັບການປິ່ນປົວ, ຫາກໍ່ໄດ້ຮັບການປິ່ນປົວໃນເມື່ອບໍ່ດົນນານມານີ້ກ່ຽວກັບວັຖຸເສພຕິດ ອັນຊຶ່ງສົ່ງຜົນສທ້ອນຕໍ່ພູມຕ້ານທານຂອງຮ່າງກາຍ ທີ່ເກີດການໃຊ້ຢາ ສເຕີຣອຍ, ຫຼືຢາປິ່ນປົວພຍາດທີ່ກໍ່ຕົວຂື້ນຕໍ່ຕ້ານເນື້ອເຍື້ອຂອງຕົວເອງ, ຢາບາງຊະນິດທີ່ມີສ່ວນກ່ຽວກັບອະວັຍະວະ ຫຼື ປ່ຽນຜ່າຕັດ ໂຣກໄຂກະດູກ.
  - ໂຣກລູຄີມເມັຍ, ໂຣກ ລິມໂຟມະ ຫຼື ໂຣກມະເລັງອື່ນໆ
  - ຢູ່ໃນລະຫວ່າງການປິ່ນປົວໂຣກມະເລັງ ໂດຍໃຊ້ແສງໄຟຟ້າ ແລະຢາ ປິ່ນປົວ ຫຼື ໄດ້ຮັບການປິ່ນປົວແບບໃດແບບນຶ່ງໃນ 3 ເດືອນຜ່ານມາ.

- ຜູ້ຍິງຄວນຈະຫຼີກລຽງຈາກການຕັ້ງທ້ອງເປັນເວລາ 4 ອາທິດ ຫຼັງຈາກສັກຢາກັນໂຣກນີ້.

ບຸກຄົນທີ່ຢູ່ໃນໃກ້ ຫຼືຢູ່ຮ່ວມກັບໃຜຜູ້ນຶ່ງທີ່ຕົກຢູ່ໃນກໍຣະນີຕ່າງໆທີ່ກ່າວມາ ຂ້າງເທີງນີ້ບໍ່ຄວນສັກຢາກັນໂຣກນີ້, ເພາະວ່າ ໂອກາດການສ່ຽງທີ່ຢູ່ ໃກ້ກັບບຸກຄົນຜູ້ທີ່ຈະຕິດເຊື້ອ ໂຣກນັ້ນມີຫຼາຍ. (ການຢູ່ໃກ້ກັບບຸກຄົນເຫຼົ່າ ນັ້ນຈະລວມທັງຢູ່ຮ່ວມກັບໃຜຜູ້ນຶ່ງໃນຄອບຄົວດຽວກັນ, ບຸກຄົນອື່ນໆທີ່ ທ່ານຢູ່ໃກ້ຊິ ດກັບເຂົາ ເຊັ່ນຮ່ວມເພດກັບເຂົາ. ນີ້ຈະບໍ່ລວມເຖິງໝູ່ ຫຼື ເພື່ອນທຳງານຮ່ວມກັບທ່ານ)

- ຢາສັກກັນ ໂຣກນີ້ບໍ່ແນະນຳໃຫ້ສັກກັບເດັກນ້ອຍທີ່ອາຍຸຕ່ຳກວ່າ 18 ປີ.

- ຫ້າມສັກຢາກັນ ໂຣກນີ້ ຖ້າວ່າທ່ານເຄີຍເກີດອາການແພ້ຢ່າງແຮງ **ກັບຢາໂປລີມີຊິນ ບີ ສເຕັບໂຕມີຊິນ, ໂຄຼເທີຣາໄຊກຼີນ, ນີໂອໄມຊິນ, ຫຼື ເຄີຍແພ້ຢາກັນໂຣກນີ້ ມາກ່ອນ.**

- ແມ່ຜູ້ທີ່ລ້ຽງລູກດ້ວຍນ້ຳນົມຕົນເອງບໍ່ຄວນຈະສັກຢາກັນ ໂຣກນີ້.

- ບຸກຄົນຜູ້ທີ່ໃຊ້ຢາ ສເຕີຣາຍ ຊະນິດຢາຢອດຕານັ້ນບໍ່ຄວນຈະສັກຢານັ້ນ

- ບຸກຄົນທີ່ປ່ວຍໄຂ້ແຮງຫຼືບໍ່ແຮງ ໃນຊ່ວງລະຫວ່າງນັດໝາຍໄປສັກຢານັ້ນຄວນຈະລໍຖ້າງົດການສັກຢາຊົ່ວຄາວໄປ ຈົນກະທັ້ງເຊົາໄຂ້ແລ້ວ ຈຶ່ງຄ່ອຍສັກຢາກັນ ໂຣກນີ້.

> ຖ້າຫາກທ່ານອາການຢ່າງໃດຢ່າງນຶ່ງດັ່ງທີ່ໄດ້ກ່າວມາຂ້າງເທີງນີ້,
> ຄວນຈະສັກປຶກສາກັບທ່ານໝໍເສັຍກ່ອນ ກ່ອນຈະສັກຢາກັນໂຣກຊະນິດນີ້.

### ເຂົ້າໄປຮັກການສັກຢາກັນໂຣກ ໃນຍາມທີ່ສຸກເສີນ (ຍາມທີ່ໂຣກອອກຕຸ່ມຕາມຜີວໜັງ ລະບາດ).

- ຂໍ້ຫ້າມເຫຼົ່ານີ້ຈະໃຊ້ບໍ່ໄດ້ ໃນລະຫວ່າງທີ່ ໂຣກອອກຕຸ່ມຕາມຜີວໜັງ ກຳລັງແຜ່ລະບາດ

## 7 ພັຍອັນຕະຣາຍທີ່ຈະເກີດຈາກ ການສັກຢາກັນໂຣກນີ້ມີຫຍັງແດ່?

*ໃຫ້ເບິ່ງຄຳແນະນຳ **VIS** ໃນພາກ **A** ສຳຣັບລາຍລະອຽດ ພີ່ມຕື່ມ.*

ຂໍ້ມູນດັ່ງຕໍ່ລົງໄປນີ້ ແມ່ນສິ່ງທີ່ **ພໍທີ່ຈະຮູ້** ໄດ້ວ່າເປັນອາການທີ່ເກີດ ຈາກການສັກຢາກັນໂຣກນີ້. ຢາກັນໂຣກ, ກໍເໝືອນກັບຢາທົ່ວໄປ, ຊຶ່ງ ມັນອາດຈະກໍ່ໃຫ້ເກີດມີບັນຫາອັນຮ້າຍແຮງໄດ້, ລວມທັງອາດຈະມີ ບັນຫາອື່ນໆທີ່ ພວກເຮົາບໍ່ຮູ້ທັນໄດ້, ເຊັ່ນການເກີດອາການທີ່ແພ້ຢາສັກ ທີ່ຮ້າຍແຮງ. ຜົນພັຍເນື່ອງຈາກການສັກຢານີ້ທີ່ວ່າຈະເປັນພັຍອັນຕຣາຍ ຕໍ່ຮ່າງກາຍ ທີ່ຮ້າຍແຮງຫຼືວ່າຈົນເຖິງຂັ້ນເສັຍຊີວິດຍ້ອນນັ້ນແມ່ນມີນ້ອຍ ທີ່ສຸດ.

### ບັນຫາຂໜາດນ້ອຍ ໄປເຖິງຂໜາດປານກາງ

- ເປັນຜື່ນແດງເລັກນ້ອຍ, ເປັນດົນປະມານ 2-4 ວັນ
- ເປັນໄຂ້ຕົວຮ້ອນສູງກວ່າ 100 ອົງສາ. (ປະມານ 10% ຂອງຜູ້ໃຫ່ຍ)
- ອອກຕຸ່ມທົ່ວໄສຽໃຄ່ພອງ ຕາມຮ່າງກາຍ (ປະມານ 1 ຕໍ່ 1,900)

ປະມານ ນຶ່ງສ່ວນສາມຂອງຜູ້ທີ່ສັກຢາກັນ ໂຣກຊະນິດນີ້ອາດຈະຮູ້ສຶກ ເປັນໄຂ້ແຮງຈົນເຖິງຂັ້ນຂໍລາພັກງານ, ຫຼືຂາດ ໂຮງຮຽນ ຫຼືງົດການ ໄປຮ່ວມກິຈະກັມຕ່າງໆໄດ້, ຫຼືອາດຈະນອນບໍ່ລັບ.

ຕໍ່ໜ້າໃໝ່...

### ບັນຫາ ຂະໜາດກາງ ໄປເຖິງ ຂະໜາດແຮງ (ເຖິງກັບວ່າຕ້ອງເຂົ້າໄປຮັບການ ປິ່ນປົວຮັກສາ)

- *ຕາອັກເສບເພາະເນື່ອງຈາກການຊິດເຊື້ອຢາປ້ອງກັນນັ້ນເຂົ້າໄປທີ່ຕາ ຊຶ່ງອາດຈະທຳໃຫ້ເສັຍສາຍຕາໄດ້.*
- *ອອກຕຸ່ມເປັນຜື່ນແດງທົ່ວຮ່າງກາຍ (ຫຼາຍຄົນເກີດມີອາການນີ້* 1-4,00 *ຄົນ) ຕາມປົກກະຕິກໍແກ້ໄຂໄດ້ ໂດຍທີ່ບໍ່ມີບັນຫາຫຍັງ.*

### ບັນຫາຂະຫາດໃຫ່ຍ ໄປຈົນເຖິງຂັ້ນເສັຍຊີວິດ

- *ອອກຕຸ່ມເປັນຜື່ນແດງທົ່ວຮ່າງກາຍ ຊະນິດທີ່ເກີດຂື້ນໄວ ແລະຂະຫຍາຍໄວ ແບບຕຸ່ມເປື້ອຍໃຂ່ພອງຕົກເກັດແລະເສັບທົ່ວ ຮ່າງກາຍ ຫຼືເປັນເປື່ອຍແບບ ຕຸ່ມໜາກສຸກໜາໃສ (ເປັນຫຼາຍ* 1 *ໃນ* 26,000 *ຄົນ) ຊຶ່ງອາດກໍ່ ທຳໃຫ້ ເປັນຮອຍຕາບຕາມຮ່າງກາຍ ຫຼື ເສັຍຊີວິດ.*
- *ສມອງອັກເສບ (ປະຕິກິຣິຍາຕໍ່ຕ້ານເກີດຂື້ນໃນສມອງ) (ຫຼາຍປະມານ* 1 *ໃນ* 83,000) *ຊຶ່ງອາດກໍ່ທຳໃຫ້ສມອງເຊື່ອມເສັຍແລະເສັຍຊີວິດ.*
- *ກໍ່ໃຫ້ເກີດການອັກເສບຢ່າງແຮງໃນທີ່ບໍຣິເວນທີ່ສັກຢາ (ຫຼາຍ* 1 *ໃນ* 667,000 *ຄົນ ສ່ວນຫຼາຍແມ່ນຜູ້ທີ່ມີພູມຕ້ານທານຕໍ່ພຍາດຕ່ຳ) ຊຶ່ງອາດ ຈະເປັນຮອຍຕາບ ຫຼືເສັຍຊີວິດ.*

**ປະມານ 14-54 ຄົນໃນ ທຸກນື່ງລ້ານຄົນທີ່ສັກຢາກັນໂຣກຊະນິດ ນີ້ໃນອະດີດຜ່ານມາ ທີ່ເກີດມີອາການຮ້າຍແຮງເຖິງຂັ້ນຈະເອົາຊີວິດ ເຂົ້າສູ່ ແຕ່ກໍ່ມີພຽງແຕ່ 1-2 ເທົ່ານັ້ນທີ່ເສັຍຊີວິດຍ້ອນ.**

*ບຸກຄົນທີ່ແພ້ເຊື້ອຢາສັກກັນ ໂຣກຊະນິດນີ້ຢູ່ແລ້ວ, ເກີດໄປແຕະຕ້ອງ ຈັບບາຍ ບໍຣິເວນ ທີ່ສັກຢາຂອງຜູ້ອື່ນຫຼືຈັບບາຍ ເຄື່ອງອຸປະກອນ ສັກຢາທີ່ສັກໃຫ້ຄົນແລ້ວ ນັ້ນກໍສາມາດທີ່ເກີດມີອາການ ແພ້ໄດ້ ເໝືອນກັນ.*

## 8 | ຈະເຮັດຢ່າງໃດ ຖ້າຫາກເກີດມີອາການຂະໜາດກາງ ໄປຫາ ຂະໜາດແຮງ?

*ໃຫ້ເບິ່ງຄຳແນະນຳ **VIS** ໃນພາກ **A** ແລະ **B** ສຳຣັບລາຍລະອຽດ ພື່ມຕື່ມ*

### ສັງເກດເບິ່ງ:

- *ບໍຣິເວນສັກຢາສັງເກດເຫັນວ່າມັນບໍ່ແຫ້ງເຊົາດີ ຕາມປົກກະຕິ, ເປັນຜື່ນແດງ, ເຈັບປວດຕາມຮ່າງກາຍ, ຕາອັກເສບ, ເຈັບຫົວບໍ່ເຊົາ, ຫຼື ເປັນໄຂ້, ສັບສົນ, ຊັກ, ງວງນອນ, ແລະເກີດມີບັນຫາອື່ນ ໂດຍທີ່ບໍ່ ເຄີຍເປັນມາກ່ອນ. ອາການຂອງການເກີດແພ້ທີ່ຮ້າຍແຮງອາດຈະລວມ ທັງການຫາຍໃຈຍາກ, ສຽງແຫບ, ຫຼື ເກີດສຽງຫວີດຂອງການຫາຍ ໃຈຝືດ. ອອ່ນເພັຍ, ຫົວໃຈ ເຕັ້ນໄວ, ເກີດສຽງຫວີດຂອງການຫາຍໃຈ ຝືດຫຼັງຈາກສັກຢາໄດ້ສອງ ສາມນາທີ ເຖິງ ສອງສາມຊົ່ວໂມງ.*

**ຖ້າທ່ານ ຫຼືຢູ່ໃຊ້ຊິດກັນ, ເຄີຍເກີດມີອາການເຫຼົ່ານີ້, ຫຼືທ່ານເປັນກັງວົນ ກ່ຽວກັບອາການ ທີ່ເກີດຂື້ນຫຼັງຈາກ ທ່ານສັກຢາກັນໂຣກ ນີ້ແລ້ວ:**

- *ໂທຣສັບຫາແພທ, ຫຼືພາບຸກຄົນນັ້ນເຂົ້າໄປຮັບການປິ່ນປົວຮັກສາທັນທີ*
- *ເລົ່າເຣື່ອງທີ່ເກີດຂື້ນສູ່ແພທຟັງ ວ່າທ່ານໄດ້ສັກຢາກັນ ໂຣກຊະນິດນີ້ ແລະສັກເມື່ອໃດ.*
- *ບອກໃຫ້ແພທ ຫຼືນາງພຍາບານທຳຣາຍງານກ່ຽວກັບບັນຫາທີ່ເກີດຂື້ນ ຍ້ອນການສັກຢານີ້ ເພື່ອຕິດຕໍ່ບອກກັບທາງກະຊວງສາທາຣະນະສຸກ. ທ່ານສາມາດຈະຣາຍງານກ່ຽວກັບບັນຫາທີ່ເກີດຂື້ນຍ້ອນການສັກຢານີ້ ເອງໄດ້ ໂດຍຕິດຕໍ່ເຂົ້າໄປເອົາຟອມໄດ້ທີ່* http:// www.vaers.org *ຫຼື ໂທຣໄປທີ່* 1-800-822-7967.

### ການປິ່ນປົວ ອາການແພ້ທີ່ເກີດຂື້ນແຮງ

- *ຢາແວັກຊາຍເນັຍ ອິມມູ ໂກຼບູລິນ* Vaccinia Immue Globulin (VIG) *ສາມາດຊ່ອຍຄົນຜູ້ທີ່ເກີດອາກາແພ້ຢ່າງແຮງ ເນື່ອງຈາກ ການສັກຢາກັນໂຣກ ຊະນິດນີ້. ອີກຊະນິດນຶ່ງຄືຢາ* cidofovir *ຊາຍ ໂດ ໂຟເວີ ສາມາດເອົາໃຊ້ ປິ່ນປົວຊ່ອຍແກ້ໄຂ ໃນບາງກໍຣະນີໄດ້. ຢາທັງສອງຊະນິດ ຖືກອະນຸມັດໃຫ້ໃຊ້ ປິ່ນປົວ ອາການແພ້ດັ່ງກ່າວໄດ້ ແລະຢາທັງສອງ ນີ້ກໍອາດຈະມີປະຕິກິຣິຍາ ໂຕ້ຕອບກັນເອງຢູ່ໃນຕົວຂອງມັນ.*

### ຄ່າໃຊ້ຈ່າຍໃນການປິ່ນປົວ ເນື່ອງຈາກ ການແພ້ຜົນຂອງການສັກຢານີ້

- *ຄ່າປິ່ນປົວຮັກສາຜູ້ທີ່ເກີດອາການແພ້ຢ່າງແຮງຍ້ອນການສັກຢາກັນ ໂຣກນີ້ ແມ່ນແພງຫຼາຍ, ປະກັນພັຍສຸຂພາບຫຼືປະກັນພັຍຄົນງານ ອາດຈະບໍ່ຍອມ ຈ່າຍຄ່າ ປິ່ນປົວນີ້ໃຫ້.*
- *ອາດຈະບໍ່ມີເງິນຊົດເຊີຍໃດໆຈາກທາງຣັຖບານຈ່າຍໃຫ້ ໃນເວລາ ທີ່ທ່ານໄປ ທຳງານບໍ່ໄດ້ເພາະເຈັບປ່ວຍຈາກການແພ້ ຢາກັນ ໂຣກນັ້ນ ເຖິງຈະແມ່ນ ເຈັບປ່ວຍຈາກການສັກຢາ ຫຼື ຕິດເຊື້ອ ໂຣກນີ້ຈາກຜູ້ອື່ນມາ. ສ່ວນທາງນາຍຈ້າງ ອາດຈະບອກໃຫ້ທ່ານຮູ້ ຖ້າວ່າເພີ່ນ ຫຼື ປະກັນພັຍ ຂອງ ໂຮງງານຈະຈ່າຍຄ່າ ຕ່າງໆເຫຼົ່ານີ້ໃຫ້ທ່ານ.*

## 9 | ຂ້າພະເຈົ້າຈະຮຽນຮູ້ເພີ່ມຕື່ມກ່ຽວກັບເຣື່ອງນີ້ໄດ້ຢ່າງໃດ?

- *ອ່ານເບິ່ງທີ່* VIS
- *ສອບຖາມນຳແພທ ຫຼື ນາງພຍາບານ, ເພີ່ນອາດຈະເອົາຂໍ້ມູນຕ່າງໆ ກ່ຽວກັບ ເຣື່ອງຢາກັນ ໂຣກຊະນິດໃຫ້ທ່ານເບິ່ງ ຫຼື ອາດຈະບອກທ່ານ ໄປເອົາ ຢູ່ບ່ອນ ໃດບ່ອນນຶ່ງ.*
- *ໂທຣສັບໄປທີ່ກະຊວງສາທາຣະນະໃນເຂດທ້ອງຖິ່ນຫຼືໃນຣັຖຂອງທ່ານ*
- *ຕິດຕໍ່ໄປຍັງສູນຄວບຄຸມແລະປ້ອງກັນ ໂຣກ* Center for Disease Control and Prevention (CDC):
  - *ໂທຣ* **1-800-246-2675** (*ພາສາອັງກິດ*)
  - *ໂທຣ* **1-800-246-2857** (*ສະເປນນິສ*)
  - *ໂທຣ* **1-866-874-2646** (TTY)
  - *ເບິ່ງໃນຄອມພີວເຕີ ທາງອິນເທີເນັດ ໄດ້ທີ່* http://www.cdc.gov/smallpox/

**U.S. Department of Health & Human Services**

*ສູນຄວບຄຸມແລະປ້ອງກັນ ໂຣກຕິດຕໍ່*

*ໂປຼແກຣມສັກຢາປ້ອງກັນ ໂຣກຂອງ ສະຫາຣັຖ*

Smallpox (1/16/03) Vaccine Information Statement